ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການລັດຖະບານ

ເລກທີ 1175 /ຫລບ.ກຜ

ນະຄອນຫລວງວຽງຈັນ, ວັນທີ 6. 8. 2013

## ແຈ້ງການ

ຮຽນ : ທ່ານລັດຖະມົນຕີວ່າການ ກະຊວງການເງິນ ທີ່ນັບຖື.

ເລື່ອງ : ການອອກລະບຽບການຈັດທະບຽນເອກະສານ ຂອງພະແນກການເງິນ ນະຄອນຫຼວງວຽງຈັນ ທີ່ບໍ່ສອດຄ່ອງກັບລັດຖະບັນຍັດ ເລກທີ 03/ປປທ, ລົງວັນທີ 19 ພະຈິກ 2008 ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ.

- ອີງຕາມໜັງສືສະເໜີ ຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ສະບັບເລກທີ 567/ສຄອ, ລົງວັນທີ 22 ກໍລະກົດ 2013;
- ອີງຕາມຄຳເຫັນຊີ້ນຳຂອງ ທ່ານຮອງນາຍົກລັດຖະມົນຕີ, ຜູ້ຊີ້ນຳວຽກງານເສດຖະກິດ ຄັ້ງວັນທີ 2 ສິງຫາ 2013.

ຫ້ອງວ່າການລັດຖະບານ ຂໍຖືເປັນກຽດແຈ້ງຄຳເຫັນຊີ້ນຳຂອງຂັ້ນເທິງມາຍັງທ່ານຊາບ ດັ່ງນີ້: "ມອບໃຫ້ກະຊວງການເງິນ ຮີບຮ້ອນໄປກວດກາ ລະບຽບການຈັດທະບຽນເອກະສານ ຂອງພະແນກການເງິນ ນະຄອນຫລວງວຽງຈັນ ສະບັບເລກທີ 04/ກງ.ນວ,ລົງວັນທີ 24 ມິຖຸນາ 2013, ຖ້າເຫັນວ່າຂັດກັບລະບຽບກົດໝາຍ ແມ່ນໃຫ້ຍົກເລີກ".

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ, ຫົວໜ້າຫ້ອງວ່າການລັດຖະບານ

ດຣ. ສິນລະວົງ ຄູດໄຟທູ

ບ່ອນນຳສົ່ງ :

| | |
|---|---|
| - ນາຍົກ- ຮອງນາຍົກ | 05 ສະບັບ |
| - ຫ້ອງວ່າການສູນກາງພັກ | 01 ສະບັບ |
| - ທ່ານຮອງຫົວໜ້າ ຫລບ | 02 ສະບັບ |
| - ກະຊວງອຸດສາຫະກຳ ແລະ ການຄ້າ | 01 ສະບັບ |
| - ນະຄອນຫຼວງວຽງຈັນ | 01 ສະບັບ |
| - ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ | 01 ສະບັບ |
| - ກົມກົດໝາຍ | 01 ສະບັບ |
| - ເກັບມ້ຽນ | 05 ສະບັບ |